# ບົດສຳພາດ
# ໂດຍທ່ານ ຕຸລາລິດ ພິມມະສຸລິນ ຮອງຫົວໜ້າພະແນກການຕະຫຼາດ

## ຫົວຂໍ້ : "ເມື່ອຕ້ອງເຂົ້າມາໃຊ້ບໍລິການຢູ່ທະນາຄານ ຈະມີວິທີປ້ອງກັນການລະບາດຂອງພະຍາດ ໂຄວິດ 19 ແນວໃດ ?"

ຕາງໜ້າໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ໂດຍທ່ານ ຕຸລາລິດ ພິມມະສຸລິນ ຮອງຫົວໜ້າພະແນກການຕະຫຼາດ ໄດ້ໃຫ້ຄຳແນະນຳວິທີການເຮັດທຸລະກຳທາງການເງິນຜ່ານທາງລະບົບເອເລັກໂທຣນິກ ຂອງ ທຄຕລ ເພື່ອຫຼີກລ້ຽງການເຂົ້າມາທະນາຄານ ທັງເປັນການປ້ອງກັນການລະບາດຂອງພະຍາດ COVID-19.

➢ **ໃນນາມ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນທະນາຄານທີ່ມີລູກຄ້າມາໃຊ້ບໍລິການເປັນຈຳນວນຫຼາຍ, ທະນາຄານ ໄດ້ມີວິທີປ້ອງກັນການລະບາດພະຍາດ ໂຄວິດ 19 ແນວໃດ ?**

ຊ່ວງໄລຍະຜ່ານມານີ້, ເພື່ອເປັນການປ້ອງກັນການລະບາດຂອງພະຍາດ COVID-19 ນີ້ ທາງ BCEL ກໍ່ໄດ້ມີການປັບປຸງສະຖານທີ່ບໍລິການໃຫ້ມີຄວາມສະດວກສະບາຍຫຼາຍຂຶ້ນ ໃຫ້ມີຄວາມປອດໄພ ການບໍລິການບໍ່ໃຫ້ມີຄວາມແອອັດ, ມີການອານາໄມ ຂ້າເຊື້ອຕ່າງໆ ໃຫ້ມີຄວາມຖີ່ຫຼາຍຂຶ້ນ ເພື່ອຮັບປະກັນດ້ານຫຼັກການອານາໄມ. ນອກຈາກນັ້ນ, ພວກເຮົາຍັງໄດ້ມີການອັບເກຣດ ຫຼື ຍົກລະດັບຜະລິດຕະພັນຂຶ້ນມາ ໂດຍສະເພາະແມ່ນຜະລິດຕະພັນເອເລັກໂທຣນິກ ເພື່ອໃຫ້ຫຼຸດຜ່ອນຈຳນວນລູກຄ້າທີ່ມາໃຊ້ບໍລິການຢູ່ເຄົາເຕີ້ບໍລິການຫຼຸດລົງ ແລະ ຫັນມາໃຊ້ຜະລິດຕະພັນເອເລັກໂທຣນິກໃຫ້ຫຼາຍຂຶ້ນ.




➢ **ຢາກໃຫ້ທ່ານລົງເລິກວ່າມີທຸລະກຳທາງການເງິນໃດແນ່ ທີ່ບໍ່ຈຳເປັນຕ້ອງມາທະນາຄານ ກໍ່ສາມາດໃຊ້ບໍລິການໄດ້**

ເພື່ອລະດົມສັງຄົມໃຫ້ຫັນມາໃຊ້ຜະລິດຕະພັນເອເລັກໂທຣນິກຫຼາຍຂຶ້ນ ແລະ ກໍ່ເພື່ອເປັນການປ້ອງກັນພະຍາດ COVID-19 ນີ້, ທາງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກໍ່ໄດ້ມີການອັບເກຣດຜະລິດຕະພັນຈຳນວນໜຶ່ງຂຶ້ນມາ ໂດຍສະເພາະແມ່ນ ຜະລິດຕະພັນ OneCash ທີ່ບໍ່ຈຳເປັນຕ້ອງໃຊ້ເງິນສົດ ເຊິ່ງເປັນຜະລິດຕະພັນໜຶ່ງທີ່ປຽບສະເໝືອນກະເປົາອີເລັກໂທຣນິກ ທີ່ເຮົາສາມາດໂອນເງິນໃຫ້ກັນໄດ້ທາງໂທລະສັບມືຖື ອາດຈະເປັນຂອງຂວັນໃນວັນສຳຄັນໃຫ້ກັບຄົນທີ່ທ່ານຮັກ ເຊັ່ນ: ງານແຕ່ງງານ, ງານຜູກແຂນ ຫຼື ງານທີ່ສຳຄັນຂອງພວກເຮົາ. ນອກຈາກນັ້ນ, ຜະລິດຕະພັນ OneCash ຍັງສາມາດນຳໃຊ້ຊຳລະຄ່າສາທາລະນູປະໂພກ ໂດຍສະເພາະແມ່ນເສຍຄ່ານ້ຳ, ຄ່າໄຟ, ຊຳລະຄ່າສິນຄ້າ ແລະ ການບໍລິການອື່ນໆ. ປະຈຸບັນນີ້, ທຄຕລ ກໍ່ມີຮ້ານຄ້າທີ່ຮອງຮັບການຊຳລະດ້ວຍ QR Code ຫຼາຍກວ່າ 10.000 ຮ້ານ ໃນທົ່ວປະເທດ. ເຊິ່ງເປັນການເອື້ອອ□ານວຍຄວາມສະດວກໃຫ້ແກ່ສັງຄົມກໍ່ຄືລູກຄ້າ ຫຼີກລຽງການນ□າໃຊ້ເງິນສົດ.

➢ **ສຳລັບຜູ້ທີ່ຍັງບໍ່ມີບັນຊີກັບທະນາຄານ BCEL ຈະນຳໃຊ້ໄດ້ແນວໃດ ?**

ສຳລັບລູກຄ້າທີ່ຍັງບໍ່ມີຄວາມພ້ອມ ຫຼື ບໍ່ມີຄວາມສະດວກ ທີ່ຈະເຂົ້າມາເປີດບັນຊີກັບ ທຄຕລ ໃນໄລຍະນີ້, ທະນາຄານກໍ່ໄດ້ສ້າງເງື່ອນໄຂ ແລະ ເອື້ອອຳນວຍຄວາມສະດວກໃຫ້ລູກຄ້າເພີ່ມຂຶ້ນອີກ ໂດຍໃຫ້ລູກຄ້າໂຫຼດແອັບພລິເຄຊັນ BCEL One ກໍ່ຄື

ຜະລິດຕະພັນ OneCash ມານຳໃຊ້ ເຊິ່ງປະຈຸບັນໄດ້ມີການອັບວົງເງິນຂຶ້ນເຖິງ 5.000.000 ກີບ ສຳລັບຜູ້ທີ່ຍັງບໍ່ມີບັນຊີກັບ ທຄຕລ ທີ່ຜ່ານມານີ້ກໍ່ແມ່ນຜະລິດຕະພັນ OneCash ທີ່ເຮົາໄດ້ອັບເກຣດຂຶ້ນມາ ໃຫ້ສັງຄົມກໍ່ຄືລູກຄ້າທົ່ວໄປໄດ້ນຳໃຊ້. ສຳລັບລູກຄ້ານິຕິບຸກຄົນ, ຫ້າງຮ້ານ, ບໍລິສັດທົ່ວໄປ ປະຈຸບັນນີ້ ທະນາຄານກໍ່ໄດ້ອັບເກຣດຜະລິດຕະພັນ BCEL i-Bank ຂຶ້ນມາອີກລະດັບໜຶ່ງ ກໍ່ຄື i-Bank Version 4 ທີ່ເອື້ອອຳນວຍຄວາມສະດວກໃຫ້ກຸ່ມລູກຄ້ານິຕິບຸກຄົນ ຫຼື ຫ້າງຮ້ານທົ່ວໄປ ໂດຍສະເພາະລະບົບການໂອນເງິນ ເຊິ່ງໃນເມື່ອກ່ອນລະບົບ i-Bank ຈະຕ້ອງໄດ້ໂອນເງິນຜ່ານຄອມພິວເຕີ, ແຕ່ມາໃນປະຈຸບັນນີ້ທະນາຄານກໍ່ໄດ້ມີການອັບເກຣດຜະລິດຕະພັນຂຶ້ນມາໂດຍສາມາດໂຫຼດແອັບພລິເຄຊັນ BCEL i-Bank ຢູ່ Smart Phone ໄດ້ໂດຍສະເພາະແມ່ນລະບົບ Android ແລະ IOS ເຊິ່ງລະບົບດັ່ງກ່າວຈະສາມາດນຳໃຊ້ງານງ່າຍຂຶ້ນ ທັງຮັບປະກັນຄວາມປອດໄພ ສາມາດຢືນຢັນການເຮັດທຸລະກຳດ້ວຍການສະແກນໃບໜ້າ ແລະ ມີການແຈ້ງເຕືອນທຸລະກຳຕ່າງໆຜ່ານໂທລະສັບມືຖື ພ້ອມທັງສາມາດເບິ່ງຄືນລາຍການເຄື່ອນໄຫວທີ່ຜ່ານມາໄດ້ສະດວກ ແລະ ງ່າຍຂຶ້ນ. ສຳລັບອົງກອນໃດທີ່ຍັງບໍ່ມີຜະລິດຕະພັນ BCEL i-Bank ກໍ່ສາມາດຕິດຕໍ່ເຂົ້າມາ ທາງທະນາຄານຈະມີທີມງານແນະນຳວິທີການນຳໃຊ້ຜະລິດຕະພັນດັ່ງກ່າວໃຫ້ ເພື່ອຫຼຸດຜ່ອນຈຳນວນລູກຄ້າທີ່ເຂົ້າມາເຄົ້າເຕີບໍລິການ ໃຫ້ຫັນມານຳໃຊ້ຜະລິດຕະພັນເອເລັກໂທຣນິກໃຫ້ຫຼາຍຂຶ້ນ.

- **ສຳລັບບຸກຄົນທີ່ຈຳເປັນຕ້ອງໃຊ້ເງິນສົດ ?**

ບຸກຄົນທີ່ຈຳເປັນຕ້ອງໃຊ້ເງິນສົດກໍ່ຖືວ່າປາສະຈາກບໍ່ໄດ້ ເນື່ອງຈາກວັດທະນາທຳການນຳໃຊ້ເງິນສົດຢູ່ປະເທດເຮົາກໍ່ຍັງມີຫຼາຍຢູ່ ເຖິງວ່າເທັກໂນໂລຊີມີຄວາມທັນສະໄໝ ແຕ່ປະຊາຊົນທີ່ຢູ່ເຂດທ້ອງຖິ່ນ ທີ່ຍັງບໍ່ທັນສາມາດຂະຫຍາຍເອເລັກໂທຣນິກເຂົ້າໄປເຖິງ (ການຊຳລະຜ່ານ QR Code ຍັງບໍ່ເຖິງ) ກໍ່ຕ້ອງມີການນຳໃຊ້ເງິນສົດ. ແຕ່ວ່າການນຳໃຊ້ເງິນສົດທາງ ທຄຕລ ກໍ່ໄດ້ມີຕູ້ ATM ຮອງຮັບທົ່ວປະເທດ, ເຊິ່ງຜະລິດຕະພັນດັ່ງກ່າວນີ້ ກໍ່ໄດ້ມີການອັບເກຣດຂຶ້ນມາ ໂດຍຈະບໍ່ໃຊ້ບັດ ATM ຖອນເງິນສົດຈາກຕູ້ ATM ແຕ່ສາມາດໃຊ້ໂທລະສັບມືຖືສະແກນ QR Code ຈາກຕູ້ ATM ໃນການຖອນເງິນສົດ ທັງນີ້ກໍ່ເພື່ອເປັນການຫລຸດຫຼູດຜ່ອນການສຳພັດກັບຕູ້ ATM ໃຫ້ຫຼາຍຂຶ້ນ, ຫັນມາໃຊ້ໂທລະສັບມືຖືສະແກນ QR Code ຈາກຕູ້ ATM ເພື່ອຖອນເງິນສົດ ໂດຍບໍ່ຕ້ອງໃຊ້ບັດ ATM. ທັງນີ້ກໍ່ເພື່ອເປັນການຫຼູດຜ່ອນການສຳພັດຕູ້ ATM ແລະ ເພື່ອປ້ອງກັນການຕິດພະຍາດ COVID-19 ຮັບປະກັນຄວາມປອດໄພ ທັງເປັນການປະຢັດເວລາ.

- **ມີບໍລິການໃດຮອງຮັບບໍ່ ຖ້າຈຳເປັນຕ້ອງໄປທະນາຄານເພື່ອສອບຖາມ ຫຼື ແກ້ໄຂ ບັນຫາ ກ່ຽວກັບທຸລະກຳທາງການເງິນ ?**

ສຳລັບການຕອບໂຈດບັນຫາດັ່ງກ່າວ ທາງ ທຄຕລ ກໍ່ໄດ້ພັດທະນາຜະລິດຕະພັນ OneCare ຂຶ້ນມາ ເພື່ອຫຼູດຜ່ອນຄວາມແອອັດຂອງລູກຄ້າທີ່ເຂົ້າມາເຄົາເຕີ້ບໍລິການ. ຜະລິດຕະພັນດັ່ງກ່າວ ປຽບເໝືອນເປັນທີ່ປຶກສາສ່ວນໂຕຂອງລູກຄ້າ ສາມາດໃຊ້ບໍລິການໄດ້ 24 ຊົ່ວໂມງ ຢ່າງສະດວກສະບາຍ ແລະ ງ່າຍດາຍ, ພຽງແຕ່ທ່ານເຂົ້າໄປໃນ Icon OneCare ຢູ່ແອັບ BCEL One ທ່ານກໍ່ສາມາດຢັ້ງຢືນໂຕຕົນຂອງທ່ານໄດ້ໃນການແກ້ໄຂບັນຫາຕ່າງໆນັ້ນ ເຖິງວ່າລູກຄ້າຈະຢູ່ແຫ່ງຫົນໃດຂອງໂລກ ກໍ່ສາມາດຕິດຕໍ່ດ້ວຍການໂທ ຫຼື ການແຊັດ ຫຼື ຝາກຂໍ້ຄວາມ ເວລາລູກຄ້າໄປຕ່າງປະເທດກໍ່ບໍ່ຈຳເປັນຕ້ອງເປີດ Roaming ກໍ່ສາມາດເຂົ້າ OneCare ຢັ້ງຢືນໂຕຕົນໃນການແກ້ໄຂບັນຫາຕ່າງໆໄດ້ງ່າຍຂຶ້ນ ສະດວກ ແລະ ວ່ອງໄວ ທັງຮັບປະກັນຄວາມປອດໄພ.

ຕ່າງໜ້າໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງບັນດາລູກຄ້າ ກໍ່ຄືສັງຄົມໃຫ້ມີສະຕິນຳກັນ ໂດຍການຫຼູດຜ່ອນບໍ່ເຂົ້າໄປຊຸມຊົນ ສະຖານທີ່ແອອັດ, ພ້ອມດຽວກັນນີ້ ກໍ່ຮຽກຮ້ອງມາຍັງລູກຄ້າ ກໍ່ຄືສັງຄົມ ໃຫ້ຫັນມາເຮັດທຸລະກຳທາງການເງິນຜ່ານລະບົບເອເລັກໂທຣນິກຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃຫ້ຫຼາຍຂຶ້ນ ເພື່ອຫຼູດຜ່ອນຄວາມສ່ຽງການແຜ່ລະບາດຂອງພະຍາດ COVID-19. ນອກຈາກນັ້ນ, ກໍ່ມີຜົນດີຕໍ່ກັບການປະຢັດເວລາ ແລະ ປ້ອງກັນການຕິດເຊື້ອດັ່ງກ່າວ. ອີກບັນຫາໜຶ່ງ, ກໍ່ຢາກຝາກມາເຖິງສັງຄົມໃຫ້ມີການຕິດຕາມຂໍ້ມູນຂ່າວສານນຳກັນຕາມສື່ທີ່ມີຄວາມໜ້າເຊື່ອຖື.